ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

-------------------

ແຂວງຊຽງຂວາງ
ອົງການປົກຄອງແຂວງ

ເລກທີ 01 /ຈຂ.ຊຂ
ວັນທີ 05.01.2017

**ຄຳສັ່ງແນະນຳ**

**ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ສະກັດກັ້ນການຂຸດຄົ້ນ, ເຄື່ອນຍ້າຍ, ສົ່ງອອກໄມ້ ແລະ ການດຳເນີນສຳຫຼວດກວດກາຕໍ່ບັນດາຂະແໜງການ ແລະ ເມືອງທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບໃນການອະນຸຍາດຂຸດຄົ້ນ, ທ້ອນໂຮມ ແລະ ສົ່ງອອກໄມ້ຢູ່ແຂວງຊຽງຂວາງ**

ເຖິງ: ບັນດາທ່ານເຈົ້າເມືອງ, ບັນດາທ່ານຫົວໜ້າພະແນກການ, ບໍລິສັດທີ່ຂຸດຄົ້ນໄມ້ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ.

**ເລື່ອງ: ການຄຸ້ມຄອງປ່າໄມ້ ແລະ ສະກັດກັ້ນການຂຸດຄົ້ນ, ເຄື່ອນຍ້າຍ, ສົ່ງອອກໄມ້ ແລະ ການດຳເນີນສຳຫຼວດກວດກາຕໍ່ບັນດາຂະແໜງການ ແລະ ເມືອງທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບໃນການອະນຸຍາດຂຸດຄົ້ນ, ທ້ອນໂຮມ ແລະ ສົ່ງອອກໄມ້ຢູ່ແຂວງ.**

- ອີງຕາມສິດ ແລະ ໜ້າທີ່ຂອງເຈົ້າແຂວງທີ່ໄດ້ກຳນົດຢູ່ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງໃສ່ຄຳສັ່ງຂອງຄະນະປະຈຳພັກແຂວງ ສະບັບເລກທີ 01/ຄປພຂ, ລົງວັນທີ 03 ມັງກອນ 2017.

ເພື່ອເຮັດໃຫ້ການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງຖືກຕ້ອງຕາມແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ແລະ ບັນດານິຕິກຳກົດໝາຍຂອງລັດ ໃຫ້ມີຄວາມເຂັ້ມງວດ.

**ເຈົ້າແຂວງ ແຂວງຊຽງຂວາງ ອອກຄຳສັ່ງແນະນຳດັ່ງນີ້:**

1. ວ່າດ້ວຍການຄຸ້ມຄອງປ່າໄມ້, ສະກັດກັ້ນການຂຸດຄົ້ນ, ທ້ອນໂຮມ, ເຄື່ອນຍ້າຍ ແລະ ສົ່ງອອກໄມ້.
   1.1. ອົງການປົກຄອງແຕ່ລະຂັ້ນ, ພະນັກງານ-ລັດຖະກອນ, ນັກທຸລະກິດ ແລະ ປະຊາຊົນທົ່ວແຂວງຕ້ອງເປັນເຈົ້າການປະຕິບັດພັນທະໃນການປົກປັກຮັກສາປ່າໄມ້, ສະກັດກັ້ນ ແລະ ຕ້ານການທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້ທຸກຮູບແບບ; ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ຕາມຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ຢ່າງເຂັ້ມງວດ.
   1.2. ມອບໃຫ້ອົງການປົກຄອງເມືອງ, ຫົວໜ້າພະແນກການ, ກົມກອງ ເປັນເຈົ້າການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນ, ທຸລະກິດ ແລະ ປະຊາຊົນບັນດາເຜົ່າເຊື່ອມຊຶມແນວທາງຂອງພັກ, ກົດໝາຍຂອງລັດເປັນຕົ້ນກົດໝາຍວ່າດ້ວຍປ່າໄມ້ໃຫ້ຮັບຮູ້

ເຂົ້າໃຈເປັນເຈົ້າການປົກປັກຮັກສາຊັບພະຍາກອນທຳມະຊາດໂດຍສະເພາະແມ່ນປ່າໄມ້ໃຫ້ມີຄວາມຍືນຍົງ.

1.3. ມອບໃຫ້ອົງການປົກຄອງເມືອງ ແລະ ຫົວໜ້າພະແນກການ, ກົມກອງທີ່ກ່ຽວຂ້ອງເປັນເຈົ້າການຊີ້ນຳ-ນຳພາພະນັກງານໃນຂະແໜງການທີ່ຕົນຮັບຜິດຊອບໃຫ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນຢູ່ພາຍໃນລະບຽບກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015 ຢູ່ໃນພາກທີ III ໝວດທີ 1, ໝວດທີ 2 ແລະ ຮັກສາຈັນຍາບັນຂອງພະນັກງານ-ລັດຖະກອນໃນໝວດທີ 4 ມາດຕາ 59-63ຢ່າງເຂັ້ມງວດ.ຖ້າລະເມີດກວດພົບເຫັນແມ່ນໃຫ້ປະຕິບັດວິໄນຢ່າງເຂັ້ມງວດຕາມທີ່ລະບຸໃນພາກທີ IV ມາດຕາ 72-76 ຂອງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

1.4. ໃຫ້ອົງການປົກຄອງແຕ່ລະຂັ້ນ, ພະແນກການ, ກົມກອງຕ້ອງມີຄວາມເຂັ້ມງວດ ບໍ່ອານຸຍາດໂກ່ຕ່າໄມ້ໃຫ້ແກ່ການຈັດຕັ້ງ, ບໍລິສັດ-ບຸກຄົນ ແລະ ປະຊາຊົນຂຸດຄົ້ນໄມ້ ແລະ ບໍ່ອະນຸຍາດໃຫ້ເກັບກູ້, ທ້ອນໂຮມກິ່ງງ່າ, ໄມ້ທ່ອນສັ້ນ, ໄມ້ນອນຂອນຕາຍ, ໄມ້ແກ້ໄຂນະໂຍບາຍໃຫ້ແກ່ບຸກຄົນ ຖ້າລະເມີດກວດພົບເຫັນແມ່ນໃຫ້ປະຕິບັດວິໄນຢ່າງເຂັ້ມງວດ.

1.5. ການເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງຢູ່ພາຍໃນ ແລະ ຜະລິດຕະພັນໄມ້ສຳເລັດຮູບ ແລະ ເຄື່ອງປ່າຂອງດົງອອກຕ່າງປະເທດແມ່ນໃຫ້ປະຕິບັດຕາມແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0073/ກປ, ລົງວັນທີ 3 ພະຈິກ 2016.

1.6. ມອບໃຫ້ຂະແໜງກ່ຽວຂ້ອງສົມທົບກັບກວດກາຄືນການຄຸ້ມຄອງ,ນຳໃຊ້ພາຫະນະ, ເຄື່ອງຈັກຂຸດຄົ້ນໄມ້, ປຸງແຕ່ງ, ລາກແກ່ ແລະ ຂົນສົ່ງໄມ້ໃຫ້ເຂັ້ມງວດກໍລະນີກວດກາເຫັນມີການລະເມີດຕ້ອງໄດ້ປະຕິບັດຕາມລະບຽບການ ແລະ ກົດໝາຍກຳນົດໄວ້ ແລະ ໃຫ້ບັນດາບໍລິສັດຖອນກົນຈັກໜັກທຸກປະເພດ, ພາຫານະ, ອຸປະກອນທຸກຊະນິດ ແລະ ແຮງງານທີ່ຮັບໃຊ້ໃຫ້ແກ່ການຕັດໄມ້, ຊັກລາກທ້ອນໂຮມໄມ້ຢູ່ສະໜາມ I ໃຫ້ໝົດ, ຖ້າບໍລິສັດໃດ, ນາຍໜ້າ ຫຼື ຜູ້ຮັບເໝົາຕັດໄມ້,ຊັກລາກຫາກຍັງລະເມີດຈະຖືກເຈົ້າໜ້າທີ່ດຳເນີນຄະດີຕາມລະບຽບກົດໝາຍ

1.7. ໃຫ້ເຈົ້າເມືອງ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ, ບັນດາບ້ານ ແລະ ບັນດາພະແນກການທີ່ກ່ຽວຂ້ອງເປັນເຈົ້າການຕິດຕາມກວດກາ ຕໍ່ຄົນບໍ່ດີທີ່ຈະລັກລອບເຂົ້າຕັດໄມ້ທຳລາຍປ່າ ຢູ່ເຂດປ່າສະຫງວນ, ປ່າຜະລິດ ແລະ ປ່າປ້ອງກັນຕາມພາລະບົດບາດ, ຂອບເຂດສິດໜ້າທີ່ຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ.

2. ການດຳເນີນສຳຫຼວດກວດກາຕໍ່ບັນດາຂະແໜງການ ແລະ ເມືອງກ່ຽວຂ້ອງກັບຄວາມຮັບຜິດຊອບໃນການອະນຸຍາດຂຸດຄົ້ນ, ທ້ອນໂຮມ ແລະ ສົ່ງອອກໄມ້.

2.1. ມອບໃຫ້ບັນດາພະແນກການ, ກົມກອງກ່ຽວຂ້ອງ ແລະ ອົງການປົກຄອງເມືອງ, ອົງການປົກຄອງບ້ານ ເປັນເຈົ້າການຈັດຕັ້ງດຳເນີນການສຳຫຼວດກວດກາ ຕໍ່ຄວາມຮັບຜິດຊອບໃນການອະນຸຍາດຂຸດຄົ້ນ, ທ້ອນໂຮມ ແລະ ສົ່ງອອກໄມ້ໃນຂົງເຂດຄວາມຮັບຜິດຊອບຂອງຕົນໃຫ້ເລິກເຊິ່ງເຖິງຖອງ ເພື່ອເພີ່ມທະວີບົດບາດຍົກສູງການບໍລິຫານຄຸ້ມຄອງລັດ, ຄຸ້ມຄອງສັງຄົມຕາມລະບຽບກົດໝາຍ, ປັບປຸງການຈັດຕັ້ງໃຫ້ປອດໃສໜັກແໜ້ນ, ສ້າງຄວາມຮັບຮູ້ເຂົ້າໃຈ, ສະຕິຕື່ນຕົວໃນການປະຕິບັດແນວທາງແຜນນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດໃຫ້ມີປະສິດຕິຜົນ.

2.2. ມອບໃຫ້ບັນດາເມືອງ, ພະແນກການກົມກອງທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນຂອງຕົນ ແລະ ປະສານສົມທົບຄະນະຮັບຜິດຊອບຂັ້ນເທິງໃຫ້ມີຄວາມເປັນເອກະພາບສູງ ໃນການດຳເນີນສຳຫຼວດກວດກາຮັບປະກັນໃຫ້ຖືກຕ້ອງຕາມຫຼັກການ ແລະ ກົດໝາຍກຳນົດໄວ້.

- ງົບປະມານຮັບໃຊ້ບັ້ນດຳເນີນສຳຫຼວດກວດກາໃຫ້ແຕ່ລະພາກສ່ວນກຸ້ມຕົນເອງ
- ກຳນົດເວລາກະກຽມ ແລະ ດຳເນີນການສຳຫຼວດກວດກາແມ່ນໄລຍະ 01 ເດືອນໃຫ້ສຳເລັດ.

3. ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ຢ່າງເຂັ້ມງວດ.

ຮອງເຈົ້າແຂວງ **ເຈົ້າແຂວງ ແຂວງຊຽງຂວາງ.**

ບ່ອນນຳສົ່ງ:
-ບັນດາທ່ານຄະນະປະຈຳພັກແຂວງ ເພື່ອຮັບຊາບ.
-ບັນດາທ່ານເຈົ້າເມືອງພາຍໃນແຂວງ ເພື່ອຈັດຕັ້ງປະຕິບັດ.
-ບັນດາພະແນກການ,ກົມກອງ ເພື່ອຈັດຕັ້ງປະຕິບັດ.
-ສຳເນົາ.

ບົວສອນ ສີນວນທອງ